ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC
ທັນສະໄໝ ວ່ອງໄວ ໝັ້ນໃຈ
MODERN QUICK RELIABLE

ສໍານັກງານໃຫຍ່

ເລກທີ: 0189 /ທຄຕລ.໒໐໒໕.........
ນະຄອນຫຼວງວຽງຈັນ, ວັນທີ: 17 JAN 2025

# ແຈ້ງການ

**ເຖິງ:** ບັນດາທ່ານຜູ້ຖືຮຸ້ນ, ນັກລົງທຶນ, ມວນຊົນທົ່ວໄປ ແລະ ບັນດາທ່ານລູກຄ້າຂອງ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ທີ່ເຄົາລົບ ແລະ ນັບຖື;

**ເລື່ອງ:** ການແອບອ້າງ ແລະ ປອມແປງເອກະສານທີ່ມີລາຍເຊັນຂອງທ່ານຜູ້ອໍານວຍການ ທຄຕລ.

– ອີງຕາມການແຈ້ງລາຍງານພົບເຫັນເອກະສານທີ່ມີລາຍເຊັນຂອງທ່ານຜູ້ອໍານວຍການ ທຄຕລ ຈາກທ່ານລູກຄ້າ.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ຂໍຖືເປັນກຽດແຈ້ງມາຍັງບັນດາທ່ານຜູ້ຖືຮຸ້ນ, ນັກລົງທຶນ, ມວນຊົນທົ່ວໄປ ແລະ ບັນດາທ່ານລູກຄ້າຂອງ ທຄຕລ ຊາບທົ່ວເຖິງກັນວ່າ ປະຈຸບັນມີກຸ່ມຄົນບໍ່ດີຈໍານວນໜຶ່ງໄດ້ແອບອ້າງ ແລະ ປອມແປງເອກະສານຂອງ ທຄຕລ ເພື່ອສະແຫວງຫາຜົນປະໂຫຍດອັນບໍ່ຖືກຕ້ອງ ເຊິ່ງຫຼ້າສຸດນີ້ ທຄຕລ ໄດ້ຮັບການແຈ້ງຈາກລູກຄ້າ ກ່ຽວກັບ ເອກະສານສະບັບໜຶ່ງທີ່ມີເນື້ອໃນແອບອ້າງຊື່ການນໍາຂັ້ນສູງ ແລະ ລາຍເຊັນຂອງທ່ານຜູ້ອໍານວຍການ ທຄຕລ. ພາຍຫຼັງກວດສອບເອກະສານດັ່ງກ່າວແລ້ວ ເຫັນວ່າ: ເອກະສານດັ່ງກ່າວຖືກປອມແປງຂຶ້ນ ແລະ ເນື້ອໃນຂອງເອກະສານດັ່ງກ່າວ ບໍ່ມີມູນຄວາມຈິງ (ຕົວຢ່າງເອກະສານໄດ້ຄັດຕິດມາພ້ອມນີ້).

ດ້ວຍເຫດນີ້ ທຄຕລ ຈຶ່ງຂໍແຈ້ງໃຫ້ບັນດາທ່ານຊາບດັ່ງນີ້:

1. ຂໍໃຫ້ທ່ານລູກຄ້າ, ບຸກຄົນ ຫຼື ນິຕິບຸກຄົນ ແລະ ພາກສ່ວນທີ່ໄດ້ຮັບເອກະສານຢ່າຫຼົງເຊື່ອ ແລະ ຮຽກຮ້ອງໃຫ້ ຜູ້ທີ່ມີຂໍ້ມູນ ຫຼື ມີຂໍ້ສົງໄສ ກ່ຽວກັບ ເອກະສານຕ່າງໆຂອງ ທຄຕລ ສາມາດສອບຖາມຄືນ ຫຼື ຕິດຕໍ່ຫາ ທຄຕລ ໄດ້ທຸກໆຊ່ອງທາງການຕິດຕໍ່ ເຊິ່ງພວກເຮົາຍິນດີໃຫ້ການຮ່ວມມືຢ່າງເຕັມທີ່ ແລະ ຈະຊ່ວຍຢັ້ງຢືນຄວາມຖືກຕ້ອງຂອງທຸກໆເອກະສານທີ່ອອກໂດຍ ທຄຕລ.
2. ຮຽກຮ້ອງໃຫ້ທ່ານລູກຄ້າ, ບຸກຄົນ ຫຼື ນິຕິບຸກຄົນທຸກໆທ່ານ ທີ່ຖືກກຸ່ມຄົນ ຫຼື ບຸກຄົນບໍ່ດີໄດ້ນໍາໃຊ້ເອກະສານທີ່ມີການປອມແປງດັ່ງກ່າວ ມາພົວພັນ ຫຼື ສະແຫວງຫາຜົນປະໂຫຍດຈາກທ່ານ ໃຫ້ຮ້ອງຟ້ອງດໍາເນີນຄະດີທາງດ້ານກົດໝາຍຕໍ່ກັບບຸກຄົນ ຫຼື ກຸ່ມຄົນບໍ່ດີນັ້ນ ເພື່ອປົກປ້ອງສິດຜົນປະໂຫຍດຂອງຕົວທ່ານເອງ ແລະ ເປັນການສະກັດກັ້ນຂະບວນການອາສະຍາກໍາປະເພດນີ້ ບໍ່ໃຫ້ໄປຫຼອກລວງພາກສ່ວນອື່ນເພີ່ມຕື່ມອີກ. ທຄຕລ ຍິນດີໃຫ້ຄວາມຮ່ວມມື ແລະ ຈະອໍານວຍຄວາມສະດວກແກ່ທ່ານລູກຄ້າ ແລະ ເຈົ້າໜ້າທີ່ຕໍາຫຼວດ ໃນການສະໜອງຂໍ້ມູນຫຼັກຖານທີ່ກ່ຽວຂ້ອງ ເພື່ອນໍາໂຕຜູ້ກະທໍາຜິດ ມາລົງໂທດຕາມກົດໝາຍ ແຫ່ງ ສປປ ລາວ.

ດັ່ງນັ້ນ, ຈຶ່ງຂໍແຈ້ງມາຍັງບັນດາທ່ານ ເພື່ອຊາບ ແລະ ດໍາເນີນການຕາມຄວາມເໝາະສົມດ້ວຍ.

**ຜູ້ອໍານວຍການ ທຄຕລ**

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ BANQUE POUR LE COMMERCE EXTERIEUR LAO PUBLIC ນະຄອນຫຼວງວຽງຈັນ

ບັນທະລາດ ແກ້ວປະເສີດ